**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ ຄັ້ງທີ 03 - ສົກປີ 2018-2019

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (CCM) ແມ່ນຈະໄດ້ຈັດຂຶ້ນທຸກໆ 3 ເດືອນເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອໃນຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 03 ຂອງສົກປີ 2018-2019 ໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

I. **ວັນເວລາ:** ວັນອັງຄານ, ທີ 25 ມິຖຸນາ 2019, ເວລາ 13:30 ເຖິງ 16:30.

II. **ສະຖານທີ່**: ຫ້ອງປະຊຸມຊັ້ນ 3 ກະຊວງສາທາລະນະສຸກ.

III. **ຜູ້ເຂົ້າຮ່ວມ**: ສະມາຊິກສົມບູນ ແລະ ສຳຮອງ ຈຳນວນ 17 ທ່ານ (ມີສິດອອກສຽງໄດ້ 16 ທ່ານ), ພາກສ່ວນອື່ນໆ ຈຳນວນ 13 ທ່ານ, ກອງເລຂາ CCM ຈຳນວນ 03 ທ່ານ ລວມທັງໝົດ 33 ທ່ານ.

## IV. ວາລະກອງປະຊຸມ:

1. ລາຍງານຄວາມເຫັນແລະຂໍ້ແນະນຳຈາກກອງທຶນໂລກໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອສຳລັບແຜນງານຕ້ານເອດແລະວັນນະໂຣກ ໄລຍະ 1 ມັງກອນ-31 ທັນວາ 2018 ແລະ ຕົກລົງໃຫ້ທຶນຊ່ວຍເຫຼືອປະຈຳປີ 2019 ໄລຍະແຕ່ເດືອນມັງກອນ-ທັນວາ ພ້ອມທັງທຶນຊ່ວຍເຫຼືອລ່ວງໜ້າ ໄລຍະແຕ່ເດືອນມັງກອນ-ມິຖຸນາ 2020;
2. ທົບທວນຮ່າງພະລະບົດບາດສະບັບປັບປຸງໃໝ່ຄັ້ງທີ 5 ຂອງຄະນະກຳມະການປະສານງານກອງທຶນໂລກ;
3. ລາຍງານຜົນການມາຢັ້ງມຢາມ ສ.ປ.ປ. ລາວ ຂອງທີມງານກອງທຶນໂລກ ລະຫວ່າງວັນທີ 12-14 ມິຖຸນາ 2019;
4. ລາຍງານຜົນຂອງກອງປະຊຸມ RSC ຄັ້ງຜ່ານມາ ແລະ ຂັ້ນຕອນການກະກຽມບົດສະເໜີຂໍທຶນຮອບໃໝ່ຂອງແຜນງານໄຂ້ຍຸງ;
5. ບັນຫາອື່ນໆ ແລະ ປິດກອງປະຊຸມ.

## V. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບຜົນຂອງການປຶກສາຫາລື ໃນກອງປະຊຸມ:

### 1. ລາຍງານຄວາມເຫັນ ແລະ ຂໍ້ແນະນໍາ ຈາກກອງທຶນໂລກໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອສໍາລັບແຜນງານຕ້ານເອດ ແລະ ວັນນະໂຣກ ໄລຍະ 1 ມັງກອນ ຫາ 31 ທັນວາ 2018 ແລະ ຕິກລີງໃຫ້ທຶນຊ່ວຍເຫຼືອປະຈໍາປີ 2019 ໄລຍະແຕ່ ເດືອນມັງກອນ ຫາ ທັນວາ ພ້ອມທັງທຶນຊ່ວຍເຫຼືອລ່ວງໜ້າ ໄລຍະແຕ່ເດືອນມັງກອນ ຫາ ມິຖຸນາ 2020

ຜູ້ຕາງໜ້າຈາກຫ້ອງການໜ່ວຍງານບໍລິຫານກອງທຶນໂລກ (PR-PMU) ໄດ້ລາຍງານຄວາມເຫັນ ແລະ ຂໍ້ແນະນໍາຈາກກອງທຶນໂລກໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອສໍາລັບແຜນງານຕ້ານເອດ ແລະ ວັນນະໂຣກ ໄລຍະ 01 ມັງກອນ ຫາ 31 ມັນວາ 2018 ແລະ ຕິກລີງໃຫ້ທຶນຊ່ວຍເຫຼືອປະຈໍາປີ 2019 ໄລຍະແຕ່ 01 ເດືອນມັງກອນ ຫາ ທັນວາ ພ້ອມທັງທຶນຊ່ວຍເຫຼືອລ່ວງໜ້າ ແຕ່ໄລຍະເດືອນມັງກອນ ຫາ ມິຖຸນາ 2020.

**ຈຸດສໍາຄັນຂອງການນໍາສະເໜີ**:

1. **ໂຄງການຕ້ານເອດ**:

   **ການປະເມີນຜົນການຈັດຕັ້ງປະຕິບັດໂຄງການໂດຍລວມ**: ການປະເມີນຜົນການຈັດຕັ້ງປະຕິບັດໂຄງການໂດຍລວມແມ່ນໄດ້ລະດັບ A2.

   **ການລາຍງານດ້ານການເງິນ**:

   - ເປີເຊັນການໃຊ້ຈ່າຍເງິນຊ່ວຍເຫຼືອທີ່ໄດ້ຮັບອະນຸມັດໃນປີ 2018 ແມ່ນ 76% ເນື່ອງຈາກວ່າ ໄດ້ມີການຊັກຊ້າໃນການຮັບເອົາພະນັກງານຂອງຫ້ອງການໜ່ວຍງານບໍລິຫານກອງທຶນໂລກ ແລະ ການຈັດຊື້ຢາ ARV ແມ່ນໄດ້ດໍາເນີນການໃນໄຕມາດທີໜຶ່ງຂອງເດືອນມີນາ ປີ 2019.

   **ສະພາບເງື່ອນໄຂຂອງເງິນຊ່ວຍເຫຼືອ**:

   - ເງື່ອນໄຂຂອງເງິນຊ່ວຍເຫຼືອຈໍານວນໜຶ່ງແມ່ນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ແລະ ຍັງມີເງື່ອນໄຂຂອງເງິນຊ່ວຍເຫຼືອຈໍານວນໜຶ່ງ ແມ່ນຈະຕ້ອງໄດ້ສືບຕໍ່, ເຮັດໃຫ້ສໍາເລັດ ແລະ ສົ່ງເອກະສານຕ່າງໆທີ່ກ່ຽວຂ້ອງໃຫ້ແກ່ກອງທຶນໂລກ.

   **ໜ້າວຽກຕ່າງໆດ້ານການຄຸ້ມຄອງ**:

   - ໜ້າວຽກດ້ານການຄຸ້ມຄອງ ຄື "ສົ່ງແຜນປະຕິບັດງານຕາມຜົນການສໍາຫຼວດການເຝົ້າລະວັງດ້ານພຶດຕິກໍາ ແລະການຕິດເຊື້ອເຮສໄອວີ; ສົ່ງບົດລາຍງານກ່ຽວກັບ DHIS2 ຢ່າງເປັນປົກກະຕິ & ການຈັດຕັ້ງປະຕິບັດລະບົບການກວດສອບຂໍ້ມູນໃຫ້ມີຄຸນນະພາບ ແລະ ສົ່ງແຜນການຕິດຕາມແລະປະເມີນຜົນທີ່ໄດ້ປັບປຸງ" ໃຫ້ທາງກອງທຶນໂລກ ແມ່ນເຫັນວ່າຍັງບໍ່ທັນໄດ້ສໍາເລັດເທື່ອ ແລະ ໜ້າວຽກດັ່ງກ່າວນີ້ ຈະຕ້ອງໄດ້ສືບຕໍ່ ແລະ ປະຕິບັດໃຫ້ສໍາເລັດ.

   **ການຕິກລົງໃຫ້ທຶນຊ່ວຍເຫຼືອປະຈໍາປີ**:

   - ກອງທຶນໂລກໄດ້ໃຫ້ເງິນຊ່ວຍເຫຼືອ ຈໍານວນ 3,656,885 ໂດລາສະຫະລັດ ສໍາລັບໄລຍະແຕ່ 01 ມັງກອນ ຫາ ທັນວາ 2019 ແລະ ເງິນຊ່ວຍເຫຼືອລ່ວງໜ້າຂອງຫົກເດືອນຕົ້ນປີຂອງປີ 2020.

   **ການໃຊ້ຈ່າຍເງິນຊ່ວຍເຫຼືອຂອງໂຄງການຕ້ານເອດ ແຕ່ເດືອນມັງກອນ ຫາ ມີນາ 2019**:

   - ເປີເຊັນການໃຊ້ຈ່າຍເງິນຊ່ວຍເຫຼືອແມ່ນໄດ້ 48%.

   **ເງິນເຫຼືອທີ່ຄາດຄະເນວ່າຈະນໍາໃຊ້ເຂົ້າໃນກິດຈະກໍາຕ່າງໆທີ່ເປັນບູລິມະສິດ ສໍາລັບສົກປີ 2019-2020**:

- ເງິນທີ່ເຫຼືອຈຳນວນ 77,000ໂດລາສະຫະລັດ ຈາກການຈັດຕັ້ງປະຕິບັດກິດຈະກຳໃນປີ 2018 ທາງສູນຕ້ານເອດ ແລະ ພຕພ ໄດ້ມີແຜນການນຳໃຊ້ເງິນດັ່ງກ່າວນີ້ ໃນການຈັດຊື້ນ້ຳຢາແລະອຸບປະກອນກວດເລືອດ (RDT), ຝຶກອົບຮົມການນຳໃຊ້ DHIS2 ແລະ ວຽກງານຕິດຕາມກວດກາທີ່ພາກສະໜາມ ແລະ ທາງສູນກໍ່ໄດ້ສົ່ງແຜນດັ່ງກ່າວນີ້ ໃຫ້ທາງກອງທຶນໂລກເພື່ອອະນຸມັດແລ້ວ ແຕ່ທາງກອງທຶນໂລກຍັງບໍ່ທັນໄດ້ອະນຸມັດເທື່ອ.
- ສ່ວນເງິນທີ່ເຫຼືອຈາກອັດຕາແລກປ່ຽນ ຈຳນວນ 66,000ໂດລາສະຫະລັດ ແມ່ນຈະໄດ້ນຳໃຊ້ເຂົ້າໃນການທົບທວນໂຄງການຮ່ວມ TB/HIV ແລະ ຈັດຕັ້ງປະຕິບັດໂຄງການ HANSA.

2. **ໂຄງການວັນນະໂຣກ:**

**ການປະເມີນຜົນການຈັດຕັ້ງປະຕິບັດໂຄງການໂດຍລວມ**: ການປະເມີນຜົນການຈັດຕັ້ງປະຕິບັດໂຄງການໂດຍລວມແມ່ນໄດ້ລະດັບ B1.

**ການລາຍງານດ້ານການເງິນ**:

- ເປີເຊັນການໃຊ້ຈ່າຍເງິນຊ່ວຍເຫຼືອທີ່ໄດ້ຮັບອະນຸມັດ ແມ່ນ 66.5% ຍ້ອນວ່າ ເງິນນຳສົ່ງຂີ້ກະເທີ່ຍັງບໍ່ທັນໄດ້ຖືກໃຊ້ຈ່າຍເທົ່າທີ່ຄວນ ແລະ ເຄື່ອງກວດ GeneExpert ແມ່ນໄດ້ສະໜອງໃຫ້ສະຖານບໍລິການພາຍຫຼັງທີ່ໄດ້ລາຍງານໄປແລ້ວ.

**ສະພາບເງື່ອນໄຂຂອງເງິນຊ່ວຍເຫຼືອ**:

- ເງື່ອນໄຂຂອງເງິນຊ່ວຍເຫຼືອຈຳນວນໜຶ່ງແມ່ນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ແລະ ຍັງມີເງື່ອນໄຂຂອງເງິນຊ່ວຍເຫຼືອຈຳນວນໜຶ່ງ ແມ່ນຍັງຈະຕ້ອງໄດ້ສືບຕໍ່, ເຮັດໃຫ້ສຳເລັດ ແລະ ສົ່ງເອກະສານຕ່າງໆທີ່ກ່ຽວຂ້ອງໃຫ້ແກ່ກອງທຶນໂລກ.

**ໜ້າວຽກຕ່າງໆດ້ານການຄຸ້ມຄອງ**:

- ໜ້າວຽກດ້ານການຄຸ້ມຄອງ ຈຳນວນໜຶ່ງແມ່ນໄດ້ຖືກຈັດຕັ້ງປະຕິບັດຕາມແຜນການທີ່ວາງໄວ້ ແລະ ຍັງມີໜ້າວຽກ ຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ ແລະ ໃຫ້ຄຳອະທິບາຍ ໃຫ້ແກ່ທາງກອງທຶນໂລກ.

**ການຕົກລົງໃຫ້ທຶນຊ່ວຍເຫຼືອປະຈຳປີ**:

- ກອງທຶນໂລກໄດ້ໃຫ້ເງິນຊ່ວຍເຫຼືອ ຈຳນວນ 2,360,190 ໂດລາສະຫະລັດ (ໃນນີ້ ເງິນຈຳນວນ 470,705 ໂດລາສະຫະລັດ ແມ່ນທາງກອງທຶນໂລກຈະໂອນໂດຍກົງໃຫ້ແກ່ພາກສ່ວນອື່ນໆ ແລະ ປະເທດເຮົາຈະໄດ້ຮັບແຕ່ 1,889,486 ໂດລາສະຫະລັດ) ສຳລັບໄລຍະແຕ່ 01 ມັງກອນ ຫາ ທັນວາ 2019 ແລະ ເງິນຊ່ວຍເຫຼືອລ່ວງໜ້າຂອງຫົກເດືອນຕົ້ນປີຂອງປີ 2020.

**ການໃຊ້ຈ່າຍເງິນຊ່ວຍເຫຼືອຂອງໂຄງການວັນນະໂຣກ ແຕ່ເດືອນມັງກອນ ຫາ ມີນາ 2019**:

- ເປີເຊັນການໃຊ້ຈ່າຍເງິນຊ່ວຍເຫຼືອແມ່ນໄດ້ 64%.

**ເງິນເຫຼືອທີ່ຄາດຄະເນວ່າຈະນຳໃຊ້ເຂົ້າໃນກິດຈະກຳຕ່າງໆທີ່ເປັນບູລິມະສິດ ໃນສົກປີ 2019-2020**:

- ເງິນທີ່ເຫຼືອຈຳນວນ 249,000ໂດລາສະຫະລັດ ຈາກການຈັດຕັ້ງປະຕິບັດກິດຈະກຳ ແລະ ອັດຕາແລກປ່ຽນ ໃນປີ 2019 ແມ່ນຈະໄດ້ຖືກນຳໃຊ້ເຂົ້າໃນການປະເມີນຜົນຂອງໂຄງການ, ໂຄງການ HANSA, ຈັດຊື້ເຄື່ອງຄອມພິວເຕີ້ ແລະ ນຳໃຊ້ເຂົ້າໃນວຽກງານອື່ນໆທີ່ມີຄວາມຕ້ອງການ.

## 3. ໂຄງການໄຂ້ຍຸງ:

ຕົວຊີ້ວັດສ່ວນຫຼາຍແມ່ນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້.

ການປະເມີນຜົນການຈັດຕັ້ງປະຕິບັດໂຄງການໄຂ້ຍຸງ ແຕ່ເດືອນ ກໍລະກົດ ຫາ ທັນວາ 2018:

| ຕົວຊີ້ວັດ | ການໃຫ້ຄະແນນ |
|---|---|
| ການສືບຕໍ່ແຈກຢາຍ ມຸ້ງຍ້ອມຢາ (LLINs) | B2 |
| ໄດ້ກວດຫາເຊື້ອໄຂ້ຍຸງຢູ່ໂຮງໝໍລັດ | A1 |
| ໄດ້ກວດຫາເຊື້ອໄຂ້ຍຸງທີ່ຊຸມຊົນ | B2 |
| ໄດ້ກວດຫາເຊື້ອໄຂ້ຍຸງຢູ່ໂຮງໝໍເອກະຊົນ | A1 |
| % ທີ່ໄດ້ກວດຫາເຊື້ອໄຂ້ຍຸງຢູ່ໂຮງໝໍລັດ | A2 |
| % ທີ່ໄດ້ກວດຫາເຊື້ອໄຂ້ຍຸງທີ່ຊຸມຊົນ | A2 |
| % ທີ່ໄດ້ກວດຫາເຊື້ອໄຂ້ຍຸງຢູ່ໂຮງໝໍເອກະຊົນ | A2 |
| % ຢາບໍ່ຂາດສາງ | B1 |
| % ກໍລະນີທີ່ໄດ້ ສືບສວນ ແລະ ຈັດປະເພດ | B2 |
| % ທີ່ໄດ້ສືບສວນຫາແຫຼ່ງເພາະເຊື້ອ (foci) | B1 |
| % ທີ່ລາຍງານຕາມກຳນົດເວລາ | A1 |
| **ການໃຫ້ຄະແນນໂດຍລວມໃນການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອ** | **B1** |

- ອັດຕາການໃຊ້ຈ່າຍເງິນຊ່ວຍເຫຼືອໂດຍລວມ ແຕ່ເດືອນ ກໍລະກົດ ຫາ ທັນວາ ປີ 2018 ແມ່ນໄດ້ 89%;
- ອັດຕາການໃຊ້ຈ່າຍເງິນຊ່ວຍເຫຼືອໂດຍລວມ ແຕ່ເດືອນ ມັງກອນ ຫາ ມີນາ ປີ 2019 ແມ່ນໄດ້ 59%.

**ສິ່ງທ້າທາຍ**:

- ການຍົກເວັ້ນພາສີອາກອນ ແມ່ນມີຂັ້ນຕອນທີ່ຍືດເຍື້ອຍາວນານ ແລະ ເຮັດໃຫ້ການນຳເຂົ້າອຸປະກອນການແພດທີ່ຮັບໃຊ້ໃນໂຄງການໄຂ້ຍຸງມີຄວາມຊັກຊ້າ;
- ການປ່ຽນແປງລະບົບການປິ່ນປົວແຫ່ງຊາດ ແມ່ນມີຂັ້ນຕອນທີ່ຍືດເຍື້ອຍາວນານ;
- ບັນດາຂັ້ນຕອນ ແລະ ລະບຽບການພາຍໃນ ແມ່ນໄດ້ເຮັດໃຫ້ການເບີກຈ່າຍເງິນໃຫ້ແກ່ຂັ້ນທ້ອງຖິ່ນມີຄວາມຊັກຊ້າ ໂດຍສະເພາະແມ່ນການເບີກຈ່າຍເງິນຂອງຮ່ວງການຕອບໂຕ້ຕໍ່ການລະບາດຂອງໄຂ້ຍຸງຈາກສູນກາງໄປຫາທ້ອງຖິ່ນ;
- ການປ່ຽນແປງການໄຫຼວຽນຂອງເງິນຊ່ວຍເຫຼືອຜ່ານກະຊວງການເງິນ ມີຄວາມເປັນໄປໄດ້ທີ່ຈະມີຂັ້ນຕອນເພີ່ມຂຶ້ນອີກ ສຳລັບການເບີກຈ່າຍເງິນຊ່ວຍເຫຼືອປະຈຳໄຕມາດ;
- ພະນັກງານໄດ້ມີການສັບປ່ຽນກັນຢູ່ເລື້ອຍໆ ແລະ ພະນັກງານທີ່ມາປ່ຽນແທນ ແມ່ນບໍ່ໄດ້ຮັບການຝຶກອົບຮົມ.

**ບູລິມະສິດຂອງໂຄງການ ໃນປີ 2019**:

- ຈັດສັນແຜນງານສຳລັບຫົກເດືອນທ້າຍປີ 2019 ແລະ ງົບປະມານ ປີ 2020, ຄາດຄະເນເປົ້າໝາຍຂອງຕົວຊີ້ວັດ ແລະ ອຸປະກອນການແພດ;

- ການໂຄສະນາເຜີຍແຜ່ການໃຊ້ມຸ້ງຍ້ອມຢາ (LLINs) ໃຫ້ກວມເອົາປະຊາກອນຈຳນວນ 1,65 ລ້ານຄົນ ຊຶ່ງເປັນຜູ້ທີ່ມີຄວາມສ່ຽງຕໍ່ໄຂ້ຍຸງ;
- ເພີ່ມທະວີກິດຈະກຳການຕອບໂຕ້ຕໍ່ການລະບາດຂອງໄຂ້ຍຸງ ໃນເຂດທີ່ມີຄວາມສ່ຽງສູງ;
- ການເຝົ້າລະວັງເລື່ອງປະສິດທິພາບໃນການປິ່ນປົວຂອງຢາຕ້ານເຊື້ອໄຂ້ຍຸງແຖວທີ 1 ແລະ 2;
- ກິດຈະກຳການລົບລ້າງໄຂ້ຍຸງທີ່ເປັນເປົ້າໝາຍ ໃນ 13 ແຂວງ ພາກກາງ ແລະ ພາກເໜືອ;
- ການຝຶກອົບຮົມ ການເຝົ້າລະວັງ ແລະ ການນຳໃຊ້ DHIS2 ໃຫ້ແກ່ແຂວງ ແລະ ເມືອງຕ່າງໆ;
- ກອງປະຊຸມກ່ຽວກັບເງື່ອນໄຂຂອງເງິນສົມທົບລັດຖະບານ ສຳລັບເງິນຊ່ວຍເຫຼືອປະຈຸບັນຂອງ RAI (500,000ໂດລາ ທີ່ຍັງຈະຕ້ອງໄດ້ນຳໃຊ້);
- ການທົບທວນ ແລະ ການພັດທະນາແຜນຍຸດທະສາດແຫ່ງຊາດຂອງແຜນງານໄຂ້ຍຸງ;
- ການສ້າງບົດສະເໜີໂຄງການ ສຳລັບຂໍທຶນຮອບຕໍ່ໄປ.

**ຄຳເຫັນຈາກກອງປະຊຸມ :**

1. ຜູ້ຕາງໜ້າຈາກ ອົງການອານາໄມໂລກ (WHO) ກ່າວວ່າ:
   - ຕາມປົກກະຕິແລ້ວເງິນທີ່ເຫຼືອຈາກແຜນງານຕ້ານເອດ ແລະ ວັນນະໂຣກ ຈະສາມາດຮູ້ໄດ້ ກໍ່ແມ່ນທ້າຍປີ, ເງິນຈຳນວນດັ່ງກ່າວນີ້ ແມ່ນຈະຕ້ອງໄດ້ນຳໃຊ້ເຂົ້າໃນກິດຈະກຳຂອງຮອບວຽນເງິນຊ່ວຍເຫຼືອຮອບຕໍ່ໄປຂອງກອງທຶນໂລກ. ເປັນຫຍັງຈຶ່ງຕ້ອງນຳໃຊ້ເງິນເຫຼືອດັ່ງກ່າວນີ້ ເຂົ້າໃນໂຄງການ HANSA?;
   - ການນຳໃຊ້ເງິນທີ່ເຫຼືອຈາກແຜນງານດັ່ງກ່າວນີ້ຄວນຈະຕ້ອງໄດ້ຮັບການເຫັນດີຈາກລັດຖະບານເສຍກ່ອນ;
   - ແຜນງານແຫ່ງຊາດ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ ຈະຕ້ອງໄດ້ຮີບຮ້ອນຈັດຕັ້ງປະຕິບັດກິດຈະກຳເທົ່າທີ່ຈະປະຕິບັດໄດ້ ເພື່ອຫຼີກລ້ຽງບໍ່ໃຫ້ມີເງິນເຫຼືອເກີດຂຶ້ນ.
2. ຜູ້ຕາງໜ້າຈາກ CHAS ໄດ້ກ່າວວ່າ:
   - ທາງສູນຕ້ານເອດ ແລະ ພຕພ ກໍ່ບໍ່ເຂົ້າໃຈລະອຽດກ່ຽວກັບແຫຼ່ງທຶນທີ່ຈະເອົາມາຈັດຕັ້ງປະຕິບັດໂຄງການທົດລອງ HANSA ຊຶ່ງງົບປະມານດັ່ງກ່າວນີ້ ກໍ່ບໍ່ໄດ້ຖືກວາງແຜນມາກ່ອນ, ແລະ ຕໍ່ມາກອງທຶນໂລກ ໄດ້ແຈ້ງໃຫ້ທາງພວກເຮົາຊາບວ່າ ຈະນຳໃຊ້ເງິນທີ່ເຫຼືອຈາກແຜນງານຕ້ານເອດໃນປີ 2018 ແລະ 2019. ໃນປະຈຸບັນນີ້, ທາງສູນຕ້ານເອດ ແລະ ພຕພ ແມ່ນໄດ້ມີແຜນທີ່ຈະນຳໃຊ້ເງິນຈຳນວນທີ່ເຫຼືອດັ່ງກ່າວນັ້ນແລ້ວເຂົ້າໃນກິດຈະກຳທີ່ເປັນບູລິມະສິດຂອງແຜນງານຕ້ານເອດ. ທາງສູນກໍ່ຍັງບໍ່ມີຂໍ້ມູນລະອຽດວ່າ ທາງກອງທຶນໂລກຈະເອົາເງິນທີ່ເຫຼືອຈາກແຜນງານຕ້ານເອດມາແຕ່ໃສເພື່ອນຳໃຊ້ເຂົ້າໃນໂຄງການທົດລອງ HANSA;
   - ທາງກອງທຶນໂລກໄດ້ແຈ້ງໃຫ້ທາງສູນພວກເຮົາຊາບວ່າ ໄດ້ມເງິນເຫຼືອ ຈຳນວນ 77,000ໂດລາສະຫະລັດ ຈາກການຈັດຊື້ຢາ ARV ແລະ ທາງສູນພວກເຮົາໄດ້ສະເໜີໄປຫາກອງທຶນໂລກແລ້ວ ວ່າຈະຂໍນຳໃຊ້ເງິນຈຳນວນດັ່ງກ່າວນີ້ ເພື່ອຝຶກອົບຮົມເລື່ອງວຽກງານຕ້ານເອດ ແຕ່ທາງກອງທຶນໂລກພັດແຈ້ງກັບຫາພວກເຮົາວ່າຈະນຳໃຊ້ເງິນທີ່ເຫຼືອດັ່ງກ່າວນີ້ ເຂົ້າໃນໂຄງການ HANSA.
3. ຜູ້ຕາງໜ້າຈາກຫ້ອງການໜ່ວຍງານບໍລິຫານກອງທຶນໂລກ (PMU) ໄດ້ກ່າວວ່າ ທາງກອງທຶນໂລກໄດ້ແຈ້ງໃຫ້ພວກເຮົາ ໃຫ້ຕິດຕາມກວດກາ ແລະ ລາຍງານ ໃຫ້ກອງທຶນໂລກຮັບຊາບກ່ຽວກັບຈຳນວນເງິນທີ່ເຫຼືອຈາກແຕ່ລະຮ່ອງເງິນຊ່ວຍເຫຼືອ ເພື່ອທາງກອງທຶນໂລກຈະໄດ້ເອົາເງິນທີ່ເຫຼືອດັ່ງກ່າວນີ້ ນຳໃຊ້ເຂົ້າໃນໂຄງການ HANSA.

4. ຜູ້ຕາງໜ້າຈາກ ກະຊວງແຜນການ ແລະ ການລົງທຶນ (MPI) ໄດ້ເປັນຫ່ວງກ່ຽວກັບຄວາມຊັກຊ້າໃນການຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ ແລະ ບັນດາສິ່ງທ້າທາຍທີ່ທາງແຜນງານໄຂ້ຍຸງໄດ້ລາຍງານໄປແລ້ວນັ້ນ ລ້ວນແລ້ວແຕ່ເປັນບັນຫາເກົ່າໆທີ່ພວກເຮົາໄດ້ແກ້ໄປແລ້ວ ໂດຍສະເພາະແມ່ນ ເລື່ອງການຍົກເວັ້ນພາສີອາກອນ ຫຼື ການປະຕິບັດກິດຈະກໍາຊັກຊ້ານີ້ ອາດເປັນຍ້ອນຂອດເອກະສານພາຍໃນຂອງກະຊວງສາທາລະນະສຸກເອງ;
5. ປະທານ CCM ໄດ້ສັງລວມຈຸດຄັນດັ່ງລຸ່ມນີ້:
   - ຍັງມີຫຼາຍໆທ່ານທີ່ຍັງບໍ່ທັນໄດ້ເຂົ້າໃຈແຈ້ງກ່ຽວກັບໂຄງການ HANSA, ໂຄງການດັ່ງກ່າວນີ້ ແມ່ນການທົດລອງຮ່ວມກັນ ໂດຍທາງກອງທຶນໂລກ ແລະ ທະນາຄານໂລກ ໄດ້ອອກແບບອອກມາ ຊຶ່ງໂຄງການດັ່ງກ່າວນີ້ ແມ່ນສຸມໃສ່ວຽກງານການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ, ແລະ ໂຄງການດັ່ງກ່າວນີ້ ຈະໄດ້ຖືກຈັດຕັ້ງປະຕິບັດຢູ່ 4 ແຂວງ ຄື ຫົວພັນ, ຜົ້ງສາລີ, ຊຽງຂວາງ ແລະ ອຸດົມໄຊ. ທາງກະຊວງພວກເຮົາກໍຍັງບໍ່ທັນໄດ້ເຂົ້າໃຈລະອຽດເທື່ອກ່ຽວກັບໂຄງສ້າງດ້ານການບໍລິຫານຄຸ້ມຄອງ ໂດຍສະເພາະແມ່ນ ຄະນະກໍາມະການປະສານງານກອງທຶນໂລກ (CCM), ຫ້ອງການໜ່ວຍງານບໍລິຫານກອງທຶນໂລກ (PR) ແລະ ຜູ້ຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ (SRs) ຈະຍັງຄົງມີຕໍ່ໄປອີກຫຼືບໍ? ຊຶ່ງບັນຫາດັ່ງກ່າວນີ້ ແມ່ນຈະໄດ້ສົນທະນາປຶກສາຫາລືກັບຄູ່ຮ່ວມງານທັງໝົດອີກຕໍ່ໄປ;
   - ແຜນງານ ຕ້ານເອດ ແລະ ວັນນະໂຣກ ຄວນລາຍງານກ່ຽວກັບບັນຫາສິ່ງທ້າທາຍ ແລະ ບຸລິມະສິດຂອງແຜນງານ ໃນປີ 2019 ວ່າມີຄືແນວໃດ?;
   - ຫ້ອງການໜ່ວຍງານບໍລິຫານກອງທຶນໂລກ ຄວນເອົາໃຈໃສ່ໃນການສົ່ງບົດລາຍງານ PUDR ໃຫ້ກອງທຶນໂລກ ຕາມເວລາທີ່ໄດ້ກໍານົດໃວ້;
   - ໃຫ້ຫ້ອງການໜ່ວຍງານບໍລິຫານໂຄງການກອງທຶນໂລກ (PR-PMU), ຜູ້ຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ ແລະ ແຜນງານແຫ່ງຊາດ ລວມທັງ CSO ທົບທວນຄືນ ແລະ ກວດສອບ ການນໍາໃຊ້ເງິນຂອງຕົນຕາມແຜນປະຕິບັດງານທີ່ໄດ້ວາງແຜນໃວ້ ເພື່ອຮັບປະກັນໃຫ້ກິດຈະກໍາຕ່າງໆເຫຼົ່ານັ້ນ ໄດ້ຖືກຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ວາງແຜນໃວ້ ແລະ ເພື່ອຫຼີກລ້ຽງບໍ່ໃຫ້ມີເງິນເຫຼືອເກີດຂຶ້ນ;
   - ສິ່ງທ້າທາຍ ທີ່ໄດ້ລາຍງານມານີ້ ບໍ່ແມ່ນເປັນບັນຫາໃໝ່ ຊຶ່ງໄດ້ເຄີຍແກ້ໄຂໄປແລ້ວ ໂດຍສະເພາະແມ່ນ ຂັ້ນຕອນການຍົກເວັ້ນພາສີ, ການສັບປ່ຽນພະນັກງານ ແລະ ອື່ນໆ. ດັ່ງນັ້ນ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງນໍາເອົາບັນຫາດັ່ງກ່າວນີ້ ໄປສົນທະນາປຶກສາຫາລື ແລະ ແກ້ໄຂ ຢ່າງຮີບດ່ວນ ເຊັ່ນ: ການຈັດຊື້, ການປະສານງານ, ຂັ້ນຕອນການໄຫຼວຽນເອກະສານ, ການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ອື່ນໆ ໃຫ້ສໍາເລັດ;
   - ສໍາລັບໂຄງການທົດລອງ HANSA ແມ່ນທາງການນໍາກະຊວງສາທາລະນະສຸກ ຈະໄດ້ພິຈາລະນາຄົ້ນຄວ້າຕື່ມ ແລະ ຂໍໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງກະກຽມຂໍ້ມູນ ແລະ ຕົວຊີ້ວັດຂອງໂຄງການ HANSA ໃວ້ ເພື່ອສະ ໜອງໃຫ້ແກ່ການນໍາກະຊວງເພື່ອພິຈາລະນາ.

## 2. ທົບທວນຮ່າງພະລະບົດບາດສະບັບປັບປຸງໃໝ່ຄັ້ງທີ 5 ຂອງຄະນະກໍາມະການປະສານງານກອງທຶນໂລກ:

ກອງເລຂາຄະນະກໍາມະການປະສານງານກອງທຶນໂລກ (CCM) ໄດ້ນໍາສະເໜີກ່ຽວກັບ ການດັດແກ້ພາລະບົດບາດ ຂອງຄະນະກໍາມະການປະສານງານກອງທຶນໂລກ ສະບັບປັບປຸງໃໝ່ຄັ້ງທີ 5 ເນື່ອງຈາກວ່າວາລະຂອງການປະຕິບັດໜ້າທີ່ວຽກງານສາມປີຂອງຄະນະກໍາມະການດັ່ງກ່າວນີ້ ຈະໄດ້ສິ້ນສຸດລົງໃນຕົ້ນເດືອນພະຈິກປີ 2019 ທີ່

ຈະມາເຖິງນີ້ ແລະ ຈະຕ້ອງໄດ້ກະກຽມການເລືອກຕັ້ງໃໝ່. ປະຈຸບັນນີ້, ທາງກອງເລຂາ ໄດ້ກະກຽມເອກະສານຕ່າງໆທີ່ກ່ຽວຂ້ອງ ແລະ ໄດ້ກຳລັງປັບປຸງພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການປະສານງານກອງທຶນໂລກໃໝ່.

**ການປັບປຸງທີ່ໄດ້ນຳສະເໜີ ຄື**:

- ປັບປຸງໂຄງຮ່າງການຈັດຕັ້ງຂອງຄະນະກຳມະການປະສານງານກອງທຶນໂລກ ໂດຍໄດ້ລຶບລ້າງຄະນະກຳມະການຂົນຂວາຍແຫຼ່ງທຶນ ເນື່ອງຈາກວ່າ ໃນໄລຍະສອງວາລະໃນການປະຕິບັດໜ້າທີ່ຜ່ານມາ ຄະນະກຳມະການດັ່ງກ່າວນີ້ ແມ່ນບໍ່ໄດ້ມີການເຄື່ອນໄຫວວຽກງານຫຼາຍປານໃດ;
- ໄດ້ເພີ່ມພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC) ດັ່ງກ່າວນີ້ ເຂົ້າເປັນພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການຕິດຕາມກວດກາ (OC) ເນື່ອງຈາກວ່າ, ຄະນະກຳມະການຕິດຕາມກວດກາ ຈະເປັນຜູ້ປະຕິບັດໜ້າທີ່ໃນການສະໜັບສະໜູນ ແລະ ຕິດຕາມກວດກາວຽກງານ ນັບຕັ້ງແຕ່ຂັ້ນຕອນການເຮັດບົດສະເໜີຂໍທຶນ ຈົນຮອດຂັ້ນຕອນການປິດຮອບວຽນເງິນຊ່ວຍເຫຼືອ ແລະ ລາຍງານໃຫ້ ຄະນະກຳມະການປະສານງານກອງທຶນໂລກ;
- ໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ ລະອຽດໃຫ້ແຕ່ລະຄະນະວິຊາການ ແລະ ລຶບລ້າງຄະນະວິຊາການວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ ເນື່ອງຈາກວ່າ ກອງທຶນໂລກ ບໍ່ໄດ້ໃຫ້ເງິນຊ່ວຍເຫຼືອແບບສຳເພາະໃຫ້ແກ່ວຽກງານດັ່ງກ່າວນີ້ແລ້ວ.

**ຄຳເຫັນຈາກທີ່ປະຊຸມ**:

- ຜູ້ຕາງໜ້າອົງການອານາໄມໂລກ (WHO) ໄດ້ໃຫ້ຄຳແນະນຳວ່າ ການປັບປຸງພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການປະສານງານກອງທຶນໂລກນີ້ ຄວນຈະເຮັດໃນຊ່ວງການຫ້າງຫາກະກຽມການຈັດຕັ້ງປະຕິບັດໂຄງການ HANSA;
- ທ່ານປະທານ ເຫັນດີກັບຄຳເຫັນຂອງຜູ້ຕາງໜ້າຈາກອົງການອານາໄມໂລກ ແລະ ແນະນຳວ່າ ການປັບປຸງພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການປະສານງານກອງທຶນໂລກ ຄວນຈະຢຸດໄວ້ຊົ່ວຄາວກ່ອນ.

**ຂໍ້ຕົກລົງຂອງກອງປະຊຸມ :**

- ກອງປະຊຸມໄດ້ເຫັນດີໃຫ້ຢຸດການປັບປຸງພາລະບົດບາດ ແລະ ໜ້າທີ່ ຂອງຄະນະກຳມະການປະສານງານກອງທຶນໂລກ ດັ່ງກ່າວນີ້ໄວ້ຊົ່ວຄາວກ່ອນ ແລະ ຈະມີການປັບປຸງພາລະບົດບາດນີ້ ໃນຊ່ວງກະກຽມການຈັດຕັ້ງປະຕິບັດໂຄງການ HANSA.

## 3. ລາຍງານຜົນການມາຢ້ຽມຢາມ ສປປ ລາວ ຂອງທີມງານກອງທຶນໂລກ ລະຫວ່າງວັນທີ 12 - 14 ມິຖຸນາ:

ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ໄດ້ນຳສະເໜີຜົນຂອງການຢ້ຽມຢາມ ສປປ ລາວ ລະຫວ່າງວັນທີ 12-14 ມິຖຸນາ 2019 ຂອງຜູ້ຈັດການກອງທຶນໂລກ ພ້ອມດ້ວຍທີມງານ, ຈຸດສຳຄັນຂອງການນຳສະເໜີ ມີດັ່ງນີ້:

**ຈຸດສຳຄັນຂອງການນຳສະເໜີ ຄື**:

**ສະຫຼຸບຫຍໍ້ໂຄງການ HANSA**: ເຫດຜົນທີ່ກອງທຶນໂລກລົງທຶນໃສ່ໂຄງການ HANSA:

- ສ້າງຄວາມເຂັ້ມແຂງໃຫ້ແກ່ການກຽມຄວາມພ້ອມໃນໄລຍະຂ້າມຜ່ານ ແລະ ຄວາມຍືນຍົງ;

- ປັບປຸງການເຂົ້າເຖິງຄຸນນະພາບດ້ານສຸຂະພາບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ ໂດຍສອດຄ່ອງກັບແຜນປະຕິຮູບຂະແໜງສາທາລະນະສຸກ;
- ເພີ່ມທະວີຄວາມເປັນເຈົ້າການພາຍໃນປະເທດ.

**ໂຄງການ HANSA ຈະຈັດຕັ້ງປະຕິບັດຄືແນວໃດ?**

- ກະຊວງສາທາລະນະສຸກ ຈະເປັນຜູ້ຈັດຕັ້ງປະຕິບັດ ໂຄງການ HANSA ພາຍໃຕ້ການຊີ້ນຳຂອງ ກົມແຜນການ ແລະ ການຮ່ວມມື;
- ໂຄງການທົດລອງ HANSA ຈະຖືກຈັດຕັ້ງປະຕິບັດ ຕາມຮູບແບບການສະໜອງເງິນຕາມຜົນໄດ້ຮັບ;
- ການລົງທຶນໃສ່ແຜນງານ TB ແລະ HIV ຈະຖືກຈັດຕັ້ງປະຕິບັດໃນໂຄງການ HANSA.

**ແຫຼ່ງທຶນໃນການຈັດຕັ້ງປະຕິບັດໂຄງການ HANSA:**

- ກູ້ຢືມໄລຍະຍາວ ຈຳນວນ 30 ລ້ານໂດລາສະຫະລັດ ຈາກທະນາຄານໂລກ;
- ເງິນຂອງກອງທຶນໂລກ ແມ່ນຍັງເປັນເງິນຊ່ວຍເຫຼືອ ແລະ ສ່ວນຈຳນວນເງິນແມ່ນຈະແຈ້ງໃຫ້ຊາບໃນເດືອນທັນວາ 2019.

**ການໄຫຼວຽນຂອງເງິນ ສຳລັບໂຄງການ HANSA**:

- ກອງທຶນໂລກຈະເບີກຈ່າຍເງິນໂດຍກົງໃຫ້ກະຊວງສາທາລະນະສຸກ ຫຼື ກະຊວງການເງິນ ໂດຍອີງຕາມຜົນໄດ້ຮັບທີ່ໄດ້ຢັ້ງຢືນ ຕາມລະບຽບການຂອງລັດຖະບານ. ຈາກນັ້ນ, ເງິນຈະໄດ້ຖືກໂອນໄປທີ່ຂັ້ນແຂວງ ແລະ ອີງການຈັດຕັ້ງທາງສັງຄົມຕ່າງໆ.

**ໂຄງການທົດລອງ HANSA ຈະຈັດຕັ້ງປະຕິບັດເວລາໃດ?**

ການລົງທຶນຂອງກອງທຶນໂລກເຂົ້າໃນໂຄງການ HANSA ຈະແບ່ງອອກເປັນ 2 ໄລຍະ ຄື:

- ໄລຍະທີ 01: ປີ 2020 ແມ່ນເງິນທີ່ຈັດສັນຄືນໃໝ່ຈາກເງິນຊ່ວຍເຫຼືອໃນຮອບປະຈຸບັນທີ່ໄດ້ອະນຸມັດແລ້ວ (ໄລຍະກະກຽມ);
- ໄລຍະທີ 02: ການລົງທຶນໃນສົກປີ 2021-2023 ແມ່ນປະມານ 70% ຂອງຈຳນວນເງິນໃນງວດຕໍ່ໄປ (ໄລຍະຂະຫຍາຍໂຄງການ).

**ໂຄງການ HANSA ໄລຍະທີ 01 ໃນປີ 2020**:

- ໄລຍະທຳອິດ ແມ່ນເພື່ອກະກຽມ ແລະ ທົດລອງຮູບແບບໂຄງການ ໃນ 4 ແຂວງ ຄື: ຫົວພັນ, ຜົ້ງສາລີ, ຊຽງຂວາງ ແລະ ອຸດົມໄຊ. ສ່ວນບັນດາແຂວງທີ່ເຫຼືອ ແມ່ນຍັງຄົງຈັດຕັ້ງປະຕິບັດຕາມຮູບແບບເງິນຊ່ວຍເຫຼືອຂອງຮອບປະຈຸບັນ;
- ສືບຕໍ່ສົນທະນາປຶກສາຫາລືກັບສູນ NTC, CHAS ແລະ ຄູ່ຮ່ວມງານທີ່ສຳຄັນ ກ່ຽວກັບການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ແລະ ຄຳຖາມຕ່າງໆກ່ຽວກັບດັດສະນີດ້ານຄຸນນະພາບແລະປະສິດທິພາບ;
- ບັນດາຕົວຊີ້ວັດ ສຳລັບແຜນງານ TB ແລະ HIV ໃນໂຄງການ HANSA ປີ 2020 ແມ່ນຄືກັນກັບຂອບເຂດແຜນງານທີ່ໄດ້ຮັບອະນຸມັດຈາກເງິນຊ່ວຍເຫຼືອປະຈຸບັນ;
- ກອງທຶນໂລກ ຄາດວ່າຈະເຊັນສັນຍາຮ່ວມມືກັບ WB ໃນເດືອນ ສິງຫາ 2019;
- ກອງທຶນໂລກ ຄາດວ່າຈະດັດແກ້ເງິນຊ່ວຍເຫຼືອຮອບປະຈຸບັນກັບ PR ໂດຍເພີ່ມກອບຂອງການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ໃນເດືອນ ກັນຍາ/ ຕຸລາ ປີ 2019.

**ໂຄງການ HANSA ໄລຍະທີ 02 ໃນປີສົກປີ 2021-2023**:

ການຈັດສັນເງິນຂອງກອງທຶນໂລກ ຈະແບ່ງອອກ ຄື:




**ອົງປະກອບທີ 01 ຂອງໂຄງການທົດລອງ HANSA:**

ການເຊື່ອມສານການໃຫ້ບໍລິການ ເຂົ້າໃນການເບີກຈ່າຍຂອງລະບົບປະກັນສຸຂະພາບແຫ່ງຊາດ ໃນລະດັບສະຖານບໍລິການສຸຂະພາບ.

- ການເບີກຈ່າຍເງິນປະຈຳປີ ຕາມຜົນການຈັດຕັ້ງປະຕິບັດ ແມ່ນຈະຖືກເບີກຈ່າຍໃຫ້ສະຖານບໍລິການ ຕາມແບບມອບເໝົາຂອງລະບົບປະກັນສຸຂະພາບ;
- ການເບີກຈ່າຍເງິນຕາມຜົນການຈັດຕັ້ງປະຕິບັດ ແມ່ນອີງໃສ່ການປະເມີນຈາກດັດສະນີດ້ານຄຸນນະພາບແລະປະສິດທິພາບ;
- ດັດສະນີດ້ານຄຸນນະພາບແລະປະສິດທິພາບ ແມ່ນຈະໄດ້ຖືກກຳນົດໂດຍລັດຖະບານ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອຮັບປະກັນວ່າດັດສະນີດັ່ງກ່າວນີ້ ສາມາດນຳໄປໃຊ້ໃນທຸກໆແຂວງ;
- ດັດສະນີດ້ານຄຸນນະພາບແລະປະສິດທິພາບ ຈະໃຊ້ປະເມີນຄວາມກຽມພ້ອມ ແລະ ຄຸນນະພາບຂອງການໃຫ້ບໍລິການ;
- ຫ້ອງການສາທາລະນະສຸກເມືອງ ຈະເປັນຜູ້ເຮັດການປະເມີນ ພາຍໃນ 6 ເດືອນ ແລະ ຜົນໄດ້ຮັບຈະໄດ້ຖືກຢັ້ງຢືນໂດຍສະຖາບັນການສຶກສາອິດສະລະ ໜຶ່ງຄັ້ງຕໍ່ປີ;
- ການໃຫ້ຄະແນນປະຈຳປີ ໂດຍດັດສະນີດ້ານຄຸນນະພາບແລະປະສິດທິພາບ ຈະຖືກບັນທຶກໃນ DHIS2;
- ຄະແນນ ຈະຕ້ອງໄດ້ຫຼາຍກວ່າ 50% ສຳລັບສຸກສາ ເພື່ອທີ່ຈະໄດ້ຮັບການເບີກຈ່າຍເງິນເພີ່ມ;
- ອົງປະກອບດັ່ງກ່າວນີ້ ຈະໄດ້ເລີ່ມຈັດຕັ້ງປະຕິບັດໃນ 4 ແຂວງ ໃນປີ 2020 ແລະ ຄ່ອຍໆຂະຫຍາຍໄປທົ່ວທຸກແຂວງ.

**ອົງປະກອບທີ 02 ຂອງໂຄງການທົດລອງ HANSA:**

ການໃຫ້ບໍລິການ ຜ່ານການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ໃນລະດັບ ສູນກາງ ແລະ ແຂວງ.

**ການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ແມ່ນ:**

- ການເບີກຈ່າຍເງິນປະຈຳປີ ໃຫ້ຂັ້ນສູນກາງ ແລະ ແຂວງຕ່າງໆ ແມ່ນອີງຕາມການບັນລຸເປົ້າໝາຍ ໂດຍອີງໃສ່ຜົນໄດ້ຮັບທີ່ໄດ້ຖືກຢັ້ງຢືນແລ້ວ;

- ຕົວຊີ້ວັດຂອງແຜນງານທີ່ໄດ້ຕົກລົງຮ່ວມກັນ ລະຫວ່າງ ກະຊວງສາທາລະນະສຸກ, WB, ກອງທຶນໂລກ ແລະ ຄູ່ຮ່ວມງານວິຊາການທີ່ສຳຄັນຕ່າງໆ;
- DHIS2 ຈະຖືກໃຊ້ເພື່ອຕິດຕາມຄວາມຄືບໜ້າຂອງຕົວຊີ້ວັດທັງໝົດ;
- ການຢັ້ງຢືນປະຈຳປີ ຜ່ານສະຖາບັນການສຶກສາອິດສະລະ (IAI).

**ແມ່ນຫຍັງຈະເກີດຂຶ້ນ ຖ້າຫາກວ່າ DLI ບໍ່ບັນລຸ?**

- ຄວາມແຕກຕ່າງບໍ່ເກີນ 5% ແມ່ນຈະເປັນທີ່ຍອມຮັບ ໃນການບັນລຸເປົ້າໝາຍ ແລະ ຈະໄດ້ຮັບເບີກຈ່າຍເງິນ
- 100%;
- ໃນກໍລະນີ ບັນລຸບາງສ່ວນຂອງເປົ້າໝາຍ DLI, ຕ່ຳສຸດຕ້ອງບັນລຸ 60% ຂອງ ເປົ້າໝາຍ DLI ເພື່ອໃຫ້ມີເງື່ອນໄຂໃນການເບີກຈ່າຍເງິນ 50% ຂອງມູນຄ່າ DLI ;
- ຈະໄດ້ສືບຕໍ່ຕິດຕາມຢ່າງໃກ້ຊິດ ແລະ ຂົນຂວາຍການຊ່ວຍເຫຼືອດ້ານວິຊາການ;
- ຈຳນວນເງິນທີ່ບໍ່ໄດ້ເບີກຈ່າຍ ແມ່ນຈະໄດ້ບວກເພີ່ມເຂົ້າໃນງວດປີຕໍ່ໄປ ຖ້າເປົ້າໝາຍບໍ່ໄດ້ບັນລຸໃນປີນັ້ນ;
- ຖ້າຫາກປີຕໍ່ໄປ ຍັງບໍ່ບັນລຸອີກ ເງິນຈະຍັງຄົງເກັບໄວ້ກັບຜູ້ໃຫ້ທຶນ.

**ອົງປະກອບທີ 03 ຂອງໂຄງການທົດລອງ HANSA:**

ການຮຽນຮູ້ ແລະ ການຄຸ້ມຄອງໂຄງການ ແບບດັດສົມ (ສະໜອງ ທຶນໂດຍອີງໃສ່ປັດໃຈນຳເຂົ້າ).

ອົງປະກອບນີ້ ຈະສະໜອງເງິນໃຫ້ ຄື:

- ການປະສານງານ ແລະ ການຄຸ້ມຄອງໂຄງການ;
- ສະໜັບສະໜູນ ການລົງທຶນໃນ DHIS2;
- ການຕິດຕາມ ແລະ ປະເມີນຜົນ, ແລະ
- ການຢັ້ງຢືນຜົນໄດ້ຮັບຕ່າງໆປະຈຳປີ ຈາກພາຍນອກ.

**ອົງປະກອບທີ 04 ຂອງ HANSA**: ການຕອບໂຕ້ຕໍ່ເຫດສຸກເສີນ

- HANSA ຈະບໍ່ມີງົບປະມານສຳລັບ ການຕອບໂຕ້ຕໍ່ເຫດສຸກເສີນ;
- ມີພຽງແຕ່ເງິນຊ່ວຍເຫຼືອ ຈາກສະມາຄົມພັດທະນາສາກົນ (IDA) ທີ່ຈະມີເງື່ອນໄຂນຳໃຊ້ໄດ້ ແລະ ສ່ວນກອງທຶນໂລກ ຈະບໍ່ສະໜອງເງິນໃນອົງປະກອບນີ້.

**ບາດກ້າວຕໍ່ໄປ:**

**1. ດຳເນີນການບາດກ້າວຕ່າງໆໃຫ້ສຳເລັດ ເພື່ອລິເລີ່ມໄລຍະການກະກຽມ ສຳລັບປີ 2020:**

- ການກຳນົດດັດສະນີດ້ານຄຸນນະພາບແລະປະສິດທິພາບ ໃຫ້ສອດຄ່ອງກັບຂະບວນພາຍໃນປະເທດ;
- ການຕົກລົງເຫັນດີ ກ່ຽວກັບຕົວຊີ້ວັດ, ຄ່າຕົວຊີ້ວັດ ແລະ ເປົ້າໝາຍຕ່າງໆ;
- ກອງທຶນໂລກ ແລະ WB ຈະເຊັນສັນຍາຮ່ວມມືກັນ;
- ກອງທຶນໂລກ ແລະ MoH ດັດແກ້ຊ່ວຍເຫຼືອປະຈຸບັນ.

**2. ໄລຍະກະກຽມ ສຳລັບໂຄງການປີ 2021-2023:**

- ກອງປະຊຸມປຶກສາຫາລື ເພື່ອສົນທະນາກ່ຽວກັບການອອກແບບ ໂຄງການ HANSA ໃນເລື່ອງ ຂະບວນການ ແລະ ການດຳເນີນການຕ່າງໆ ທີ່ຈຳເປັນຕ້ອງມີ (ຕົວຢ່າງ ໂຄງສ້າງດ້ານການຄຸ້ມຄອງ);
- ສົນທະນາກ່ຽວກັບຕົວຊີ້ວັດ, ຄ່າຕົວຊີ້ວັດ ແລະ ເປົ້າໝາຍຕ່າງໆ ສຳລັບສົກປີ 2021-2023;
- ກະກຽມຂໍ້ມູນ ກ່ຽວກັບຄວາມຕ້ອງການໃນການຈັດຊື້ ສຳລັບສົກປີ 2021-2023: ເພື່ອຮັບປະກັນບໍ່ໃຫ້ມີບັນຫາເລື່ອງການຈັດຊື້ລະຫວ່າງ ການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອໃນສອງຮອບວຽນ.

**3. ບາດກ້າວທີ່ສຳຄັນ ໃນປີ 2020:**

- CCM ຈະຕ້ອງໄດ້ຍື່ນບົດສະເໜີຂໍເງິນຊ່ວຍເຫຼືອບ້າກອງທຶນໂລກ ເພື່ອລົງທຶນຮ່ວມໂຄງການ HANSA, ເອກະສານທີ່ຈະຍື່ນຂໍທຶນ ຢ່າງນ້ອຍຕ້ອງປະກອບດ້ວຍ (ຈະໄດ້ຮັບການຢືນຢັນອີກ):
  - ✓ ຮ່າງຂໍ້ຕົກລົງຮ່ວມມືລະຫວ່າງ ລັດຖະບານ ແລະ ທະນາຄານໂລກ ສຳລັບໂຄງການ HANSA;
  - ✓ ໂຄງຮ່າງດ້ານການບໍລິຫານຄຸ້ມຄອງ;
  - ✓ ໂຄງຮ່າງການຫ້າງຫາກະກຽມໃນການຈັດຕັ້ງປະຕິບັດ;
  - ✓ ແຜນຍຸດທະສາດແຫ່ງຊາດ ສຳລັບແຜນງານ TB ແລະ HIV ສະບັບປັບປຸງໃໝ່ ແລະ ງົບປະມານ;
  - ✓ ລາຍການຢາ ແລະ ອຸປະກອນການແພດ;
  - ✓ ໜັງສືຢັ້ງຢືນຈາກກະຊວງສາທາລະນະສຸກ ທີ່ແຈ້ງກ່ຽວກັບງົບປະມານຈາກພາຍໃນທີ່ຈະຈັດຊື້ຢາແມ່ນມີທໍ່ໃດ? ແລະ ຈະຈັດຊື້ເມື່ອໃດ?
- ການຂໍເງິນ ຈະຕ້ອງໄດ້ຜ່ານການພິຈາລະນາຂອງຄະນະກຳມະການ (TRP) ເພື່ອສະເໜີຄຳເຫັນຕ່າງໆ;
- ກອງທຶນໂລກ ເຊັນສັນຍາຮ່ວມມືສະບັບໃໝ່ ກັບກະຊວງສາທາລະນະສຸກ ແລະ ທະນາຄານໂລກ.

**ຄຳເຫັນຈາກທີ່ປະຊຸມ:**

- ຜູ້ຕາງໜ້າຈາກ CSO ໄດ້ຖາມວ່າ ທາງ CSO ຈະໄດ້ຮັບທຶນສະໜັບສະໜູນຕໍ່ໄປຈາກກອງທຶນໂລກ ຫຼື ບໍ ໃນໂຄງການທົດລອງ HANSA?;
- ຜູ້ຕາງໜ້າຈາກອົງການອານາໄມໂລກ ໄດ້ກ່າວວ່າ:
  - ➢ ກອງທຶນໂລກຈະໃຫ້ການສະໜັບສະໜູນ CSO ຕໍ່ໄປອີກ. ແຕ່ໂຄງການທົດລອງ HANSA ຈະເນັ້ນໃສ່ການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ(DLI) ດ້ວຍເຫດນີ້, ຖ້າການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ຫາກບັນລຸ ນັ້ນໝາຍຄວາມວ່າຜູ້ຈັດຕັ້ງປະຕິບັດໂຄງການຈະໄດ້ຮັບເງິນ. ໃນກໍລະນີທີ່ການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ(DLI) ຫາກບໍ່ບັນລຸ ກໍ່ຈະບໍ່ໄດ້ຮັບເງິນ. ດັ່ງນັ້ນ, ການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ (DLI) ຈຶ່ງມີຄວາມສຳຄັນ ແລະ ເປັນສິ່ງທ້າທາຍຫຼາຍ;
  - ➢ ຈະໄດ້ມີການສົນທະນາປຶກສາຫາລືກັນຕໍ່ໄປອີກກ່ຽວກັບລາຍລະອຽດຕ່າງໆຂອງໂຄງການທົດລອງ HANSA ກັບຄູ່ຮ່ວມງານທີ່ກ່ຽວຂ້ອງທັງໝົດ.
- ຜູ້ຕາງໜ້າຈາກທະນາຄານໂລກ (WB) ໄດ້ກ່າວວ່າ ເງິນຊ່ວຍເຫຼືອເປັນຂອງລັດຖະບານ ດັ່ງນັ້ນ, ລັດຖະບານແມ່ນມີສິດໃນການນຳໃຊ້ເງິນດັ່ງກ່າວນັ້ນ. ສຳລັບ CSO, ກອງທຶນໂລກກະມີແຜນທີ່ຈະສະໜັບສະໜູນຢູ່ແລ້ວ. ສຳລັບການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ(DLI) ແຜນງານແຫ່ງຊາດຈະຕ້ອງໄດ້ພິຈາລະນາ DLI ໃຫ້ລະອຽດທີ່ຖ້ອນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດແລະບັນລຸໄດ້ ເພື່ອຈະໄດ້ຮັບເງິນໃນງວດຕໍ່ໄປ. ທະນາຄານໂລກ (WB) ມີຄວາມຍິນດີ ແລະ ຂໍໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບ ການກຳນົດການເບີກຈ່າຍເງິນໂດຍອີງຕາມການບັນລຸຕົວຊີ້ວັດ(DLI).

**4. ລາຍງານຜົນຂອງກອງປະຊຸມ RSC ຄັ້ງຜ່ານມາ ແລະ ຂັ້ນຕອນການກະກຽມບົດສະເໜີຂໍທຶນຮອບໃໝ່ ຂອງແຜນງານໄຂ້ຍຸງ:**

ເນື່ອງຈາກວ່າຜູ້ຕາງໜ້າກອງເລຂາ RSC ບໍ່ສາມາດມານໍາສະເໜີໜ້າວຽກຂອງ RSC ຕໍ່ກອງປະຊຸມຄະນະກໍາມະການປະສານງານກອງທຶນໂລກ (CCM) ໄດ້ ດັ່ງນັ້ນ, ກອງເລຂາຄະນະກໍາມະການປະສານງານກອງທຶນໂລກ ຈຶ່ງໄດ້ນໍາສະເໜີໜ້າວຽກດັ່ງກ່າວນີ້ແທນ ຈຸດສໍາຄັນໃນການນໍາສະເໜີ ຄື:

**ຈຸດສໍາຄັນຂອງການນໍາສະເໜີ:**

1. ຜົນຂອງກອງປະຊຸມ RSC ຄັ້ງທີ 13:
   - RSC ໄດ້ລົງນາມຮັບຮອງເອົາບົດສະເໜີຂໍທຶນຂອງການລົງທຶນຄືນໃໝ່ໃສ່ແຜນງານໄຂ້ຍຸງ;
   - ແຕ່ລະປະເທດແມ່ນໄດ້ຮັບງົບປະມານຂອງການລົງທຶນຄືນໃໝ່ດັ່ງກ່າວນີ້ແລ້ວ.
2. ການຂໍທຶນຂອງໂຄງການ RAI:
   - ກອງເລຂາ RSC ໄດ້ສົ່ງໜັງສືຫາຝຣັ່ງ 5% ເພື່ອຂໍທີ່ປຶກສາຈໍານວນ 7 ທ່ານ ເພື່ອຊ່ວຍຮ່າງບົດສະເໜີຂໍທຶນຂອງໂຄງການ RAI, ໃນຈໍານວນທີ່ປຶກສາຈໍານວນ 7 ທ່ານນີ້, 2 ທ່ານຈະເປັນຜູ້ສັງລວມບົດສະເໜີຂໍທຶນທັງໝົດ ແລະ ອີກ 5 ທ່ານ ຈະໄປຊ່ວຍແຕ່ລະປະເທດໃນການຮ່າງບົດສະເໜີຂໍທຶນ (ປະເທດລະ 01 ທ່ານ);
   - ຄະນະກໍາມະການປະສານງານກອງທຶນໂລກຂອງແຕ່ລະປະເທດ ແມ່ນມີໜ້າທີ່ຮັບຜິດຊອບເລື່ອງການປະສານງານໃນການເຮັດບົດສະເໜີຂໍທຶນ ໂດຍທີ່ປຶກສາຈະເປັນຜູ້ຊ່ວຍສ້າງບົດສະເໜີຂໍທຶນດັ່ງກ່າວ;
   - ຂັ້ນຕອນຂອງການສ້າງບົດສະເໜີຂໍທຶນ:
     - ຝຣັ່ງ 5 % ຈະທົບທວນເບິ່ງໜັງສືຂໍທີ່ປຶກສາ ໃນເດືອນກໍລະກົດ 2019;
     - ພາລະບົດບາດ ແລະ ໜ້າທີ່ ຂອງທີ່ປຶກສາ ແມ່ນຈະໄດ້ຮ່າງຂຶ້ນໂດຍການປຶກສາຫາລືກັບ ຄະນະກໍາມະການປະສານງານກອງທຶນໂລກ ແລະ RSC;
     - ຝຣັ່ງ 5% ຈະດໍາເນີນການຄັດເລືອກ ແລະ ຮັບເອົາທີ່ປຶກສາ;
     - ແຕ່ລະປະເທດຈະໄດ້ມີທີ່ປຶກສາໜຶ່ງທ່ານ ມາຊ່ວຍຮ່າງບົດສະເໜີຂໍທຶນ ໃນລະຫວ່າງເດືອນ ຕຸລາ 2019 ຫາ ມີນາ 2020 (ໂດຍປະມານ);
     - ສອງທີ່ປຶກສາຈະປະຕິບັດໜ້າທີ່ ໃນການສັງລວມ ແລະ ການປະສານງານ ກ່ຽວກັບບົດຂໍທຶນທັງໝົດຂອງອົງປະກອບພາກພື້ນ ໃຫ້ສໍາເລັດໃນລະຫວ່າງເດືອນ ຕຸລາ 2019 ຫາ ມີນາ 2020 (ໂດຍປະມານ).
   - ກອບເວລາຂອງການຂໍທຶນ: ຄາດຄະເນວ່າ ທີ່ປຶກສາຂອງຝຣັ່ງ 5% ຈະສໍາເລັດການຂຽນບົດສະເໜີຂໍທຶນໃນເດືອນມີນາ 2020 ດັ່ງນັ້ນ, ຈຶ່ງໄດ້ກໍານົດກອບເວລາຂອງການດໍາເນີນວຽກງານ ຄື:
     - ທົບທວນເອກະສານທີ່ມີ/ ສະຫຼຸບສັງລວມ ແລະ ຈັດກອງປະຊຸມປຶກສາຫາລື ໃນຕົ້ນເດືອນ ຕຸລາ 2019;
     - ຈັດກອງປະຊຸມ RSC ໃນວັນທີ 31 ຕຸລາ 2019;
     - ດໍາເນີນການປຶກສາຫາລື ແລະ ສໍາພາດ ພາຍໃນປະເທດ ໃນເດືອນພະຈິກ 2019 ຫາ ທ້າຍເດືອນມັງກອນ 2020;
     - ຮ່າງບົດສະເໜີຂໍທຶນສະບັບທີ 01 ຈະຕ້ອງໄດ້ສົ່ງ ໃນທ້າຍເດືອນມັງກອນ 2020;
     - ຮ່າງບົດສະເໜີຂໍທຶນ/ ເອກະສານຂັດຕິດ ຈະຕ້ອງໃຫ້ສໍາເລັດ ແລະ ລົງນາມຮັບຮອງເອົາໂດຍ RSC ໃນລະຫວ່າງເດືອນກຸມພາ ຫາ ມີນາ 2020;

> ➢ ຫຼັງຈາກບົດສະເໜີຂໍທຶນໄດ້ຍື່ນໄປແລ້ວ ອາດຈະໄດ້ມີການຕອບຂໍ້ຊັກຖາມ ແລະ ການໃຫ້ຄໍາອະທິບາຍເພີ່ມເຕີມ ໃຫ້ແກ່ຄະນະກໍາມະການພິຈາລະນາບົດສະເໜີຂໍທຶນ (ແຕ່ເດືອນເມສາ ຫາ ມິຖຸນາ 2020).

3. ໜ້າທີ່ ແລະ ການປະສານງານ ລະຫວ່າງ ຄະນະກໍາມະການປະສານງານກອງທຶນໂລກ (CCM) ແລະ RSC:
   - RSC ຈະໄດ້ປະສານງານ, ປຶກສາຫາລື ແລະ ຮ່ວມມື ຢ່າງໃກ້ຊິດກັບ ຄະນະກໍາມະການປະສານງານກອງທຶນໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຂອງແຕ່ລະປະເທດ.

5. ບັນຫາອື່ນໆ ແລະ ການປິດກອງປະຊຸມ.

   1. ເວທີອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກດ້ານສຸຂະພາບ:
      - ເວທີອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກດ້ານສຸຂະພາບ ໄດ້ຮັບການສ້າງຕັ້ງຂຶ້ນ;
      - ໄດ້ຮ່າງ ພາລະບົດບາດ ແລະ ໜ້າທີ່ ຂອງເວທີອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກດ້ານສຸຂະພາບ ແລະ ໄດ້ນໍາສະເໜີພາລະບົດບາດ ແລະ ໜ້າທີ່ດັ່ງກ່າວນີ້ ຕໍ່ກອງປະຊຸມຄະນະກໍາມະການປະສານງານໃນຄັ້ງທີ່ຜ່ານມາ;
      - ສໍາລັບໜ້າວຽກໄຂ້ຍຸງ ແມ່ນທາງ CSO ລາວ ໄດ້ຮັບການສະໜັບສະໜູນຈາກ CSO ພາກພື້ນແມ່ນໍ້າຂອງ ເພື່ອສ້າງຄວາມອາດສາມາດໃຫ້ແກ່ CSO ລາວ.

   2. ໂຄງການພາກພື້ນຂອງແຜນງານ ວັນນະໂຣກ ແລະ ເອດ:

      - ແຜນງານວັນນະໂຣກ: ຫ້ອງການໜ່ວຍງານບໍລິຫານໂຄງການກອງທຶນໂລກ (PR-PMU) ໄດ້ຮັບເງິນຂອງໄຕມາດທີ 1 ແລະ 2 ແລ້ວ, ແລະ ກໍ່ໄດ້ໂອນເງິນຈໍານວນດັ່ງກ່າວນີ້ ໃຫ້ແກ່ຜູ້ຈັດຕັ້ງປະຕິບັດກິດຈະກໍາໂຄງການຕ່າງໆແລ້ວ;
      - ແຜນງານຕ້ານເອດ: ຍັງຢູ່ໃນຂັ້ນຕອນການຫາງຫາກະກຽມເຮັດສັນຍາຮ່ວມມືລະຫວ່າງ AFAO (ໃນນາມເປັນຫ້ອງການໜ່ວຍງານບໍລິການໂຄງການ-PR) ແລະ ຜູ້ຈັດຕັ້ງປະຕິບັດກິດຈະກໍາໂຄງການ (ຫ້ອງການໜ່ວຍງານບໍລິຫານໂຄງການກອງທຶນໂລກຂອງກະຊວງສາທາລະນະສຸກ- MOH PMU).

   ກອງປະຊຸມດັ່ງກ່າວນີ້ ໄດ້ສິ້ນສຸດລົງໃນເວລາ 16:34 ຂອງວັນທີ 25 ມິຖຸນາ 2019.

ນະຄອນຫຼວງວຽງຈັນ, ວັນທີ...10.../...7.../ 2019

| ປະທານກອງປະຊຸມ | ຜູ້ສັງລວມເນື້ອໃນກອງປະຊຸມ |
| --- | --- |
| [signature] | [signature] |
| ທ່ານ ຮສ. ດຣ. ພູທອນ ເມືອງປາກ | ທ່ານ ໜູກອນ ທະລັງສີ |